ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 278 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 29.09.2009

# ດຳລັດ

## ວ່າດ້ວຍການຮັບຮອງແຜນແມ່ບົດການສ້າງຄວາມເຂັ້ມແຂງໃນການວາງແຜນ ແລະ ຄຸ້ມຄອງການອະນຸລັກ ເມືອງວຽງໄຊ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 03 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 10/ສພຊ, ລົງວັນທີ 09 ພະຈິກ 2005.
- ອີງຕາມໜັງສືສະເໜີຂອງອົງການທ່ອງທ່ຽວແຫ່ງຊາດສະບັບເລກທີ 410/ອທຊ, ລົງວັນທີ 14 ສິງຫາ 2009.

ນາຍົກລັດຖະມົນຕີອອກດຳລັດ :

ມາດຕາ 1 : ຮັບຮອງ ແລະ ປະກາດໃຊ້ ແຜນແມ່ບົດການສ້າງຄວາມເຂັ້ມແຂງໃນການວາງແຜນ ແລະ ຄຸ້ມຄອງການອະນຸລັກ ເມືອງວຽງໄຊ ແຕ່ປີ 2006-2026.

ມາດຕາ 2 : ມອບໃຫ້ອົງການທ່ອງທ່ຽວແຫ່ງຊາດ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ ແລະ ອົງການກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ.

ມາດຕາ 3 : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 4 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ